# ບົດທີ 23

# ການນຳຄົນມາເປັນຄຣິດສະຕຽນ

**1** ໃນບົດຮຽນທີ 22 ນັ້ນທ່ານໄດ້ຮຽນເລື່ອງການເປັນພິຍານ. ຄຳພິຍານສົມຄວນຈະປະກອບດ້ວຍ 3 ສ່ວນໃດແດ່?

1. ______________________________________________

2. ______________________________________________

3. ______________________________________________

**2** ເຫດທີ່ເຮົາຈະກ່າວຄຳພິຍານໃຫ້ໝູ່ຟັງເພື່ອຫຍັງ?
ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ.



ກ. ໃຫ້ເຂົາຮູ້ວ່າເຮົາເຮັດດີກວ່າເກົ່າ.
ຂ. ໃຫ້ເຂົາຮູ້ວ່າເຮົາຈະບໍ່ຮ່ວມບາບກັບເຂົາຕໍ່ໄປ.
ຄ. ເພື່ອເຊີນເຂົາມາປະຊຸມກັບເຮົາຟັງຄຳເທດສະໜາ.
ງ. ເປີດໂອກາດນຳເຂົາມາເປັນຄຣິດສະຕຽນດ້ວຍ.

**3** ຄືວ່າເຮົາກ່າວຄຳພິຍານໃຫ້ໝູ່ຟັງເປັນວິທີຫວ່ານພືດ ແລະ ຫວັງຈະມີໂອກາດເກັບກ່ຽວຕໍ່ໄປ. ການເກັບກ່ຽວຄືຫຍັງ? (ເລືອກ)
ກ. ຫວັງວ່າເຂົາຈະເວົ້າວ່າ "ຄົນຂ້ອຍຊົ່ວຮ້າຍປານເຈົ້າ ຂ້ອຍກໍຈະໄປປະຊຸມດ້ວຍ"
ຂ. ຫວັງວ່າເຂົາຈະນັບຖືເຮົາຕໍ່ໄປ.
ຄ. ຫວັງວ່າເຂົາຈະຮັບເອົາ ພະເຢຊູ ເປັນຜູ້ຊ່ອຍຍົກຜິດບາບ.
ງ. ຫວັງວ່າເຂົາຈະຮັບຮູ້ວ່າສາດສະໜາຄຣິດດີກວ່າສາດສະໜາ ອື່ນ ໆ.

**4** ທີ່ຈິງຄຳພິຍານເປັນການແນະນຳໃຫ້ຄົນພ້ອມໃຈຮັບຟັງເລື່ອງຂ່າວປະເສີດ ເປັນວິທີເພື່ອໃຫ້ຈັບໃຈຜູ້ຟັງກ່ອນ. ຄຳພິຍານມີຜົນປະໂຫຍດຢ່າງໃດ? (ເລືອກ)
ກ. ເພື່ອໃຫ້ຈັບໃຈຄົນເຮັດໃຫ້ເຂົາຢາກຮູ້ເລື່ອງ ພະເຢຊູ.
ຂ. ບອກເລື່ອງທີ່ໜ້າຕື່ນເຕັ້ນຈາກພະຄຳພີ.
ຄ. ຊີ້ບອກອາການຜິດໃນໃຈຜູ້ຟັງ.
ງ. ບອກເຂົາເຫດທີ່ເຮົາໄປປະຊຸມທຸກອາທິດ.

**5** ຖ້າວ່າເຮົາຈະນຳຄົນມາຮັບເອົາ ພະເຢຊູ ເປັນພະຜູ້ຊ່ອຍມີບາດກ້າວ 3 ປະການ. ບາດກ້າວທຳອິດເປັນອັນທີ່ ທ່ານຮຽນມາໃນ ບົດທີ 22 ແລ້ວຄືຫຍັງ? ______________________ ຄຳພິຍານນັ້ນເພື່ອໃຫ້ເຂົາສົນໃຈຢາກຮູ້ຕື່ມອີກ.

**6** ບາດກ້າວທີສອງຄື: ການຍົກສະເໜີເລື່ອງຂ່າວປະເສີດແລະ ບາດກ້າວທີສາມຄື: ຮ້ອງໃຫ້ເຂົາມອບຕົວໄວ້ໃຫ້ພະ ອົງ. ບາດກ້າວສາມປະການໃນການນຳຄົນມາເພິ່ງພາໃນພະເຢຊູ ແມ່ນຫຍັງ? ໃຫ້ຂຽນມາຕາມລຳດັບ.

1. ______________________________
2. ______________________________
3. ______________________________

**7** ຄຳພິຍານຂອງເຮົາຄື: ວິທີແນະນຳໃຫ້ເຂົາຢາກຮູ້ເລື່ອງຂອງພະເຢຊູ. ເລື່ອງນັ້ນທ່ານຮຽນຮູ້ມາແລ້ວ ເພາະສະນັ້ນ ເຮົາຈະບໍ່ເນັ້ນຄຳເລື່ອງບາດກ້າວທຳອິດອີກຕໍ່ໄປ. ຖ້າເຮົາເວົ້າເລື່ອງປະສົບປະການລະຫວ່າງເຮົາກັບພະຊູມາ ແລ້ວກ່ອນຈະຍົກສະເໜີເລື່ອງກ່ຽວກັບພະເຢຊູ ເຮົາຄວນຈະຖາມເຂົາກ່ອນວ່າຢາກຟັງຕໍ່ຫຼືບໍ່? ເພາະມີບາງຄົນບໍ່ ຢາກຟັງເລື່ອງ ຄັນເຮົາເວົ້າຕໍ່ໄປ ແຕ່ເຂົາບໍ່ຟັງມັນກໍ່ຈະບໍ່ມີປະໂຫຍດ.

ກ. ຜູ້ໃດບໍ່ຍອມຟັງ ຜູ້ນັ້ນຈະຮັບເຊື່ອງ່າຍບໍ່? ______________________

ຂ. ຜູ້ນັ້ນຈະປຽບເໝືອນດິນຢ່າງໃດ? (ເລືອກ)

1. ດິນຕາມທາງ.
2. ດິນມີຫີນ.
3. ດິນມີພຸ່ມໜາມຫຸ້ມ.
4. ດິນດີ.



**8** ເມັດທີ່ຕົກຕາມທາງເສຍໄປໃສ? ______________________

**9** ຖ້າວ່າເຮົາຍົກສະເໜີເລື່ອງຂ່າວປະເສີດໃຫ້ຜູ້ທີ່ບໍ່ຍອມຟັງ ຜົນສຸດທ້າຍຈະເປັນຢ່າງໃດ? (ເລືອກ)

ກ. ເພິ່ນຈະຮັບເອົາພະເຢຊູ. ຂ. ເພິ່ນຈະຮັບພິຈາລະນາໄວ້ເພື່ອໃນອະນາຄົດ.
ຄ. ມານຈະມາຍາດເອົາພະຄຳໃຫ້ເສຍໄປ.

*ເພື່ອຈະໄດ້ຮັບເຊື່ອພະເຢຊູ ເພິ່ນຕ້ອງຍອມຟັງກ່ອນ.*

**10** ເທື່ອໃດທີ່ຜູ້ຟັງຍົກຄຳຖາມຫຼືສະເໜີໃຫ້ເວົ້າລະອຽດຕື່ມຕໍ່ໄປໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ເຂົາສົນໃຈຢາກຟັງຕໍ່.
ຂ. ເຂົາບໍ່ສົນໃຈແລ້ວ.
ຄ. ເຂົາບໍ່ນັບຖືຜູ້ເວົ້າ.

**11** ທຳມະດາຜູ້ເວົ້າຈະຮູ້ໄດ້ຢ່າງໃດວ່າຜູ້ຟັງສົນໃຈຟັງຕື່ມຫຼືບໍ່? ______________________
______________________________

**12** ອາດຈະເປັນເພາະວ່າຜູ້ຟັງຈະເກງໃຈຜູ້ເວົ້າຈຶ່ງບໍ່ຢາກຖາມຖ້າເປັນຢ່າງນັ້ນທ່ານຈະເປີດໂອກາດໃຫ້ເພິ່ນຢ່າງໃດ? ________________________________________________

________________________________________________________________

**13** ຖ້າທ່ານສັງເກດວ່າຜູ້ຟັງຄຳພິຍານແລ້ວ ຢາກຟັງເລື່ອງຕໍ່ທ່ານຈະສາມາດເວົ້າບາດກ້າວທີສອງຕໍ່ໄປໄດ້. ບາດ ກ້າວທີ ສອງຄືເລື່ອງໃດ? (ຕື່ມ)

ການຍົກ __________________________ ເລື່ອງ __________________________

**14** ທ່ານຍົກສະເໜີເລື່ອງຂ່າວປະເສີດນັ້ນປະກອບດ້ວຍ 4 ປະການ ດັ່ງຕໍ່ໄປນີ້ຄື:

1. ທຸກຄົນເປັນຄົນບາບທີ່ຈະຖືກຕັດສິນ.
2. ພະເຈົ້າ ຊົງຍຸດຕິທຳ ພ້ອມທັງຊົງຮັກເຮົາດ້ວຍ.
3. ພະເຢຊູ ຖືກຕັດສິນແທນເຮົາ (ຕາຍແລ້ວຄືນຈາກຕາຍ)
4. ເຮົາຈະໄດ້ຊີວິດອັນຕະຫຼອດໄປດ້ວຍການເພິ່ງພາ ພະເຢຊູ.

ກ. ຄຳວ່າ “ຊີວິດອັນຕະຫຼອດໄປ” ປາກົດມາໃນປະການແລກຫຼືປະການສຸດທ້າຍ? ________

ຂ. ປະການທຳອິດເວົ້າເຖິງໃຜ? __________________________________________

ຄ. ເຫັນຊື່ຂອງ “ພະເຢຊູ” ຫຼື “ພະເຈົ້າ” ກ່ອນ? ________________________________

ງ. ປະການໃດເວົ້າເຖິງການເພິ່ງ ພະເຢຊູ? __________________________________

ຈ. ຄຳໃດປາກົດກ່ອນ “ພະເຢຊູ” ຫຼື “ຊີວິດອັນຕະຫຼອດໄປ”? _____________________

**15** ການສະເໜີເລື່ອງຂ່າວປະເສີດທັງ 4 ປະການໄດ້ມີຊຽນລົງດັ່ງຕໍ່ໄປນີ້ ແຕ່ບໍ່ຖືກກັບລຳດັບ. ໃຫ້ທ່ານເອົາຕົວພະ ຍັນຊະນະທີ່ເປັນຫົວຂໍ້ໄປຈັບຄູ່ກັນກັບລຳດັບການຍົກສະເໜີເລື່ອງຂ່າວປະເສີດ 4 ປະການຂ້າງເທິງນັ້ນ.

ກ. ພະເຢຊູ ຖືກຕັດສິນແທນເຮົາ (ຕາຍແລ້ວຄືນຂຶ້ນມາຈາກຕາຍ) ______ 1.

ຂ. ທຸກຄົນເປັນຄົນບາບທີ່ຈະຖືກຕັດສິນ. ______ 2.

ຄ. ເຮົາຈະໄດ້ຊີວິດອັນຕະຫຼອດໄປດ້ວຍເພິ່ງ ພະເຢຊູ. ______ 3.

ງ. ພະເຈົ້າ ຊົງຍຸດຕິທຳ ທັງຊົງຮັກເຮົາດ້ວຍ. ______ 4.

**16** ໃຫ້ທ່ານຕື່ມຄວາມທີ່ຂາດໃນ 4 ປະການຕໍ່ໄປນີ້:

ກ. ______________________ ເປັນຄົນບາບທີ່ຈະຖືກຕັດສິນ.

ຂ. ______________________ ຊົງຍຸດຕິທຳ ທັງຊົງຮັກເຮົາດ້ວຍ.

ຄ. ______________________ ຖືກຕັດສິນແທນເຮົາ (ຕາຍແລ້ວຄືນຂຶ້ນມາຈາກຕາຍ)

ງ. ເຮົາຈະໄດ້ __________________________ ດ້ວຍເພິ່ງພາໃນ ພະເຢຊູ.

**17** ເມື່ອຈະຍົກສະເໜີເລື່ອງຂ່າວປະເສີດ ເຮົາຈະບອກກ່ອນວ່າມະນຸດທຸກຄົນເປັນຄົນບາບແລ້ວຈະຖືກຕັດສິນລົງ ໂທດ. ພະເຈົ້າຊົງຍຸດຕິທຳຈຶ່ງບໍ່ສາມາດຮັບຄົນບາບຂຶ້ນສະຫວັນນຳບໍ່ໄດ້ ແຕ່ພະອົງມີຄວາມຮັກແລະຍັງຫ່ວງຈຶ່ງບໍ່ຢາກປະຖິ້ມເຮົາໄປເພາະສັນນັ້ນ ພະເຢຊູ ຮັບໂທດບາບ

ຂອງເຮົາເມື່ອພະອົງຕາຍທີ່ໄມ້ກາງແຂນ. ໃນວັນສຸກທີ່ ພະເຢຊູ ຕາຍນັ້ນ ພະອົງຮັບໂທດແທນເຮົາແຕ່ມາເຖິງວັນອາທິດພະອົງຊະນະຄວາມຕາຍດ້ວຍການຄືນມາຈາກຕາຍ. ເມື່ອເວົ້າຈົບແລ້ວບາດນີ້ຍັງເຫຼືອຢູ່ແຕ່ປະການສຸດທ້າຍຄືຫຍັງ? ______________________

**18** ທ່ານຈະເລີ່ມຕົ້ນປະກາດຂ່າວປະເສີດດ້ວຍບອກວ່າ ທຸກຄົນເປັນຄົນບາບ ແລ້ວເພາະເຫດຄວາມບາບນັ້ນທຸກຄົນ ຈະຕ້ອງຖືກພິພາກສາ. ພະເຈົ້າ ເຊິ່ງເປັນຜູ້ພິພາກສາດ້ວຍຄວາມຍຸດຕິທຳ ແຕ່ຍັງຮັກມະນຸດເຮົາອີກດ້ວຍ ນັ້ນເປັນບາດກ້າວທີ 1. ແລະ 2. ແລະໃຫ້ທ່ານຂຽນອີກສອງປະການ.

3. ______________________________________________________

4. ______________________________________________________

**19** ຄັນຜູ້ຟັງຄຳພິຍານຈາກເຮົາພ້ອມໃຈທີ່ຈະຟັງເລື່ອງຂ່າວປະເສີດຂອງ ພະເຢຊູ ແລ້ວ ເຮົາຈະຕັ້ງຕົ້ນສະເໜີເລື່ອງ ນັ້ນດ້ວຍອະທິບາຍວ່າ ທຸກຄົນເປັນລັກສະນະຄົນບາບແລະໄດ້ກະທຳບາບມາແລ້ວ ຕໍ່ຈາກນັ້ນມາມີອີກສາມປະການຄື:

2. ______________________________________________________

3. ______________________________________________________

4. ______________________________________________________

**20** ຄຳພິຍານຈະເລີ່ມຕົ້ນດ້ວຍການເລົ່າເລື່ອງຊີວິດຂອງເຮົາກ່ອນທີ່ບໍ່ໄດ້ຮັບເຊື່ອ ພະເຢຊູ. ແມ່ນເພາະເຫດໃດທີ່ເຮົາ ໄດ້ເຮັດຜິດບາບຢ່າງນັ້ນ? (ເລືອກ)

ກ. ເພາະເຮົາບໍ່ມີການສຶກສາດີເທື່ອ.

ຂ. ເພາະພໍ່ແມ່ທຸກຫຼາຍ.

ຄ. ເພາະເຮົາເກີດໃນລັກສະນະເປັນຄົນບາບເໝືອນກັນທຸກຄົນ.

**21** ໃຫ້ທ່ານຂຽນ 4 ຈຸດສຳຄັນໃນການເລົ່າເລື່ອງຂ່າວປະເສີດ

1. ______________________________________________________

2. ______________________________________________________

3. ______________________________________________________

4. ______________________________________________________

**22** ໃນຄຳພິຍານເຮົາອາດຈະບອກວ່າເຮົາບໍ່ພໍໃຈກັບຊີວິດແບບເກົ່ານັ້ນປະການທີ 1 ໃນ 4 ປະການນັ້ນບອກເຫດ ທີ່ເຮົາບໍ່ພໍໃຈນັ້ນ ແລະ ບອກເຫດທີ່ຍັງດຳເນີນຊີວິດຢ່າງນັ້ນ. ເປັນຫຍັງຄົນທີ່ບໍ່ເຊື່ອໃນ ພະເຢຊູ ບໍ່ສາມາດປ່ຽນແປງຊີວິດໃຫ້ດີຂຶ້ນ? (ເລືອກ)

ກ. ເພາະເຂົາຢູ່ໃນອຳນາດຂອງຄວາມບາບທຸກຄົນ.

ຂ. ເພາະພໍ່ແມ່ບໍ່ລ້ຽງໃຫ້ດີ.

ຄ. ພວກສັກດີນານາຍທຶນກົດຂີ່ຂົ່ມເຫັງເຂົາ.

**23** ໃຫ້ທ່ານອ່ານ ໂລມ 3:10-11 ແລະ ໂລມ 3:23 ໃນຕອນພະຄຳພີສອງຕອນນັ້ນອາຈານໂປ ໂລສອນວ່າຢ່າງໃດ? (ເລືອກ)

ກ. ຄົນສ່ວນຫຼາຍດີ ມີແຕ່ໜ້ອຍຄົນເຮັດບາບ.

ຂ. ຄົນສ່ວນໜ້ອຍດີ ສ່ວນຫຼາຍເຮັດບາບ.

ຄ. ທຸກຄົນເຮັດດີໝົດ.

ງ. ທຸກຄົນເປັນຄົນບາບ.

**24** ໃນພະທຳ ສຸພາສິດ 16:25 ບອກວ່າ "ມີທາງທີ່ເພິ່ນຄິດວ່າເປັນທາງຖືກ ແຕ່ວ່າສຸດທາງນັ້ນເປັນ ຄວາມຕາຍ" ຄວາມບາບຈະແຍກເຮົາຈາກພະເຈົ້າແລະເຮັດໃຫ້ເຮົາບໍ່ຢາກຕິດຕາມພະອົງໄປ. ໃນສຸພາສິດ 16:25 ນັ້ນ ຖ້າເຮົາເດີນທາງໄປຕາມໃຈເຮົາເອງແທນທີ່ຈະເຮັດຕາມນ້ຳພະໄທ ຂອງ ພະເຈົ້າຜົນສຸດທ້າຍຈະເປັນຢ່າງໃດ? ___________________________________

**25** ໃນປະຖົມມະການ 2:16-17 ບອກວ່າຖ້າກິນໝາກໄມ້ນັ້ນຈະເປັນຢ່າງໃດ? ___________

**26** ຄວາມຕາຍຄືຖືກລົງໂທດຈາກພະເຈົ້າເພາະຫຍັງ? ______________________________

**27** ແຕ່ຄວາມບາບແລະການກະທຳບາບ ມີສ່ວນແຕກຕ່າງກັນຄື:

<u>ຄວາມຜິດບາບ</u> ຄື: ຕົ້ນກຳເນີດ ຂອງຄວາມຊົ່ວທຸກປະການ

<u>ບາບ</u> ຄື: ການໄດ້ລົງມືກະທຳຊົ່ວແຕ່ລະປະການ. ຄວາມຜິດບາບ (ໝາຍເຖິງມີຕິດຕົວແຕ່ເກີດ ແຕ່ບໍ່ທັນໄດ້ລົງມືເຮັດເທື່ອ)ສະແດງອອກມາເປັນທ່າທີເຊິ່ງແຍກເຮົາຈາກພະເຈົ້າແລະເຮັດໃຫ້ ເຮົາບໍ່ຢາກເຊື່ອຟັງຄວາມຂອງ ພະອົງ. ບາບ (ຫຼື ການໄດ້ລົງມືເຮັດບາບກໍ່ໄດ້) ຄືປາກົດມາໃນ ການກະທຳແຕ່ລະປະການຄື: ການລັກການເມົາເຫຼົ້າຢາເສບຕິດການຫຼິ້ນຊູ້ ການຕົວະ ການ ໂລບຫຼື ສໍ້ກົງ ໆລໆ ບາບຄືການກະທຳເຊິ່ງເປັນຜົນຂອງຄວາມຜິດບາບ. ໃນລາຍຊື່ຕໍ່ໄປນີ້ໃຫ້ ທ່ານຂຽນຄຳວ່າ "ບາບ" ຫຼື "ຄວາມຜິດບາບ" ຕາມທີ່ເໝາະສົມ.

ກ. ຂ້າຄົນ.

ຂ. ຮ່ວມເພດກັນລະຫວ່າງຜູ້ບໍ່ແຕ່ງງານ.

ຄ. ທ່າທີທີ່ບໍ່ຢາກຟັງຄວາມ ພະເຈົ້າ.

ງ. ເວົ້າຂວັນ ນິນທາ.

ຈ. ຢາກໄດ້ຂອງເພິ່ນ.

ສ. ໃຈຮ້າຍ.

**28** ຂໍ້ພະຄຳພີໃດຕໍ່ໄປນີ້ທີ່ບອກວ່າ ທຸກຄົນໄດ້ກະທຳບາບ? (ເລືອກ)

_____ໂຢຮັນ 3:16

_____ 2 ໂກລິນໂທ 5:19

_____ໂລມ 3:23

_____ ໂລມ 3:10-11

_____1 ເປໂຕ 3:18

**29** ມີຜູ້ບາງຄົນອາດຈະອ່ານ ໂລມ 3:23 ແລ້ວບອກວ່າ "ບໍ່ເຊື່ອດອກ! ມີບາງຄົນທີ່ບໍລິສຸດຫຼາຍບໍ່ໄດ້ເຮັດບາບຈັກ ເທື່ອ" ທີ່ຈິງຖ້າເຮົາຮູ້ຈັກເຂົາດີໆອາດຈະມີບາບທີ່ຜູ້ອື່ນບໍ່ເຫັນ ເຊັ່ນ: ການອິດສາຢາກໄດ້ຂອງຜູ້ອື່ນແລະ ຕົວະ ແຕ່ເປັນຢ່າງໃດກໍ່ຕາມທຸກຄົນຢູ່ໃຕ້ອໍານາດຂອງຄວາມຜິດບາບ. ໃຫ້ທ່ານຂຽນໃນຊ່ອງວ່າງຕໍ່ໄປນີ້ວ່າ "ບາບ" ແລະ "ຄວາມຜິດບາບ" ມີຄວາມແຕກຕ່າງກັນຢ່າງໃດ? ______________________________________________________

______________________________________________________________

______________________________________________________________

**30** ໃນ 4 ປະການທີ່ສະເໜີເລື່ອງຂ່າວປະເສີດນັ້ນ ປະການທີສອງວ່າດ້ວຍສ່ວນໃນລັກສະນະຂອງໃຜ?______________________________________________________________

1. ໃຫ້ອ່ານ ໂຢຮັນ 3:16 ຂໍ້ນີ້ບອກຢ່າງໃດ? (ເລືອກ)
   ກ. ພະເຈົ້າ ຊົງຮັກມະນຸດໃນໂລກ.
   ຂ. ພະເຈົ້າ ຊົງຊອບທໍາທີ່ຈະຕັດສິນຄວາມບາບ.
   ຄ. ພະເຈົ້າ ມີອໍານາດສູງສຸດ.
   ງ. ພະເຈົ້າ ຮ້າຍຊັງຄົນບາບ.
2. ແລ້ວໃຫ້ອ່ານ ໂລມ 3:26 ດ້ວຍ ຂໍ້ນີ້ສອນວ່າຢ່າງໃດ? (ເລືອກ)
   ກ. ພະອົງຊົງຮັກມະນຸດ.
   ຂ. ພະອົງຊົງຍຸດຕິທໍາ.
   ຄ. ມີອໍານາດບໍ່ຈໍາກັດ.
   ງ. ພະອົງໃຈຮ້າຍຕໍ່ຄວາມບາບ.

**31** ດັ່ງນັ້ນເຮົາຮູ້ຢູ່ແລ້ວວ່າພະອົງຊົງ ____________ ແລະ ຊົງ ________________ ດ້ວຍ. (ຕື່ມຄວາມທີ່ຂາດ)

**32** ອີກບາງຄົນອາດຈະວ່າ "ແມ່ນຢູ່ຂ້ອຍອາດຈະບາບແທ້ ແຕ່ຄວາມຜິດບາບຂອງຂ້ອຍບໍ່ປານຂອງຜູ້ອື່ນເປັນຢ່າງ ໃດກໍ່ຕາມພະເຈົ້າຊົງຮັກຢູ່ແລ້ວຄິດວ່າເພິ່ນຄົງຈະຍົກໂທດໃຫ້ແລ້ວ" ຄົນນີ້ຄິດບໍ່ຖືກໃນດ້ານໃດ? (ເລືອກ)
ກ. ເພິ່ນລືມວ່າ ພະເຈົ້າ ຊົງຮັກ.
ຂ. ເພິ່ນລືມວ່າ ພະເຈົ້າ ຊົງຍຸດຕິທໍາແລະຊົງຮັກດ້ວຍ.
ຄ. ເພິ່ນລືມຄໍາພິຍານຂອງທ່ານ.
ງ. ເພິ່ນລືມວ່າທຸກຄົນເປັນຄົນບາບ.

**33** ບັນຫາທີ່ ພະເຈົ້າ ຢາກຈະແກ້ຄື: (ໃຫ້ທ່ານອ່ານ ໂລມ 3:26)
ພະເຈົ້າ ບໍ່ຢາກລົງໂທດມະນຸດທີ່ເຮັດຜິດ ບາບແຕ່ ພະເຈົ້າ ເອງຊົງຍຸດຕິທໍາຈຶ່ງບໍ່ຢາກເຫັນມະນຸດຈະຕ້ອງຕາຍເພາະບາບດັ່ງນັ້ນ ພະອົງຈຶ່ງແກ້ໄຂດ້ວຍຫາທາງອອກໃຫ້ມະນຸດໂດຍໃຫ້ ພະເຢຊູ ມາຮັບໂທດແທນຄົນບາບ.

ກ. ບັນຫານັ້ນຄືຝ່າຍໃດຍຸດຕິທຳ? ______________________________________

ຂ. ຝ່າຍໃດຜິດບາບ? ______________________________________________

**34** ຄຳວ່າ "ຍຸດຕິທຳ" "ຊອບທຳ" ແລະ "ທ່ຽງທຳ" ມີຄວາມໝາຍຄືກັນໝົດ. ໃນ 4 ຂໍ້ພະຄຳພີຕໍ່ໄປນີ້ແມ່ນຂໍ້ ໃດອະທິບາຍເລື່ອງທີ່ ພະເຈົ້າ ຈະໃຫ້ຄົນບາບເຮົາຄືນດີກັບ ພະເຈົ້າ ເຊິ່ງເປັນອົງຍຸດຕິທຳ? (ເລືອກ)

_____ໂລມ 1:18 _____ ໂລມ 3:26

_____ໂລມ 3:23 _____ ໂລມ 8:28

**35** ໃນສ່ວນທີ່ສະເໜີເລື່ອງຂ່າວປະເສີດນີ້

ກ. ປະການແລກອ້າງເຖິງໃຜ? ________________________________________

ຂ. ມະນຸດເກີດມາມີບັນຫາເພາະຫຍັງ? ___________________________________

ຄ. ຜົນຮັບສຸດທ້າຍຂອງຄວາມບາບຄືຫຍັງ? _______________________________

**36** ປະການທີ 2 ຕໍ່ໄປບໍ່ໄດ້ວ່າເລື່ອງມະນຸດ

ກ. ວ່າເລື່ອງຝ່າຍໃດ? _______________________________________________

ຂ. ບັນຫາແຕ່ພະອົງຊົງ _____________ ທັງຊົງ _______________ ດ້ວຍ. (ຕື່ມຄວາມ)

ຄ. ພະອົງຊົງໂຜດຄົນບາບເຮົາ ທີ່ເຊື່ອໄວ້ວາງໃຈໃນພະເຢຊູໃຫ້ກາຍເປັນຄົນຢ່າງໃດ ຕາມໃນພະຄຳພີ ໂລມ 3:26? ________________________________________

**37** ບັນຫາທີ່ພົບແລ້ວນັ້ນໄດ້ແກ້ໄຂໂດຍຜູ້ຊອບທຳຕາຍແທນຄົນບາບ (ໃຫ້ອ່ານ 1 ເປໂຕ 3:18)

ກ. ຜູ້ຊອບທຳນັ້ນຄືໃຜ? _____________________________________________

ຂ. ແມ່ນໃຜສະຖິດໃນອົງພະເຢຊູຄຼິດໃຫ້ມະນຸດຄືນດີກັບພະອົງ?
(ໃຫ້ອ່ານ 2 ໂກລິນໂທ 5:19) ____________________________________

**38** ເຮົາຮຽນປະການທີ 1 ຄື: ມະນຸດ ປະການທີ 2 ຄື: ພະເຈົ້າ ບາດນີ້ມາເຖິງປະການທີ 3 ແລ້ວຄື: ພະເຢຊູ ຖືກຕັດ ສິນແທນໃຜ? ________________________________________

**39** ພະເຈົ້າເອງເກີດມາເປັນມະນຸດຄື: ພະເຢຊູຄຼິດ ຈຸດປະສົງທີ່ ພະເຢຊູ ມາບໍ່ແມ່ນເພື່ອຈະໃຫ້ຄົນເຫັນແລະຮູ້ອຳ ນາດຂອງພະເຈົ້າເທົ່ານັ້ນແຕ່ພະເຢຊູ ມາສະເພາະເພື່ອຈະຕາຍແທນບາບເຮົາ ຜົນຮັບຂອງບາບຄືຫຍັງ? ____________________________________________

**40** ເຄີຍເຫັນຜູ້ໃດເອົາໝູມາລ້ຽງໄວ້ໃນບ້ານຄົນບໍ່? (ບໍ່ຕອບກໍ່ໄດ້) ທຳມາດາມະນຸດຢູ່ບ່ອນໃດກໍ່ບໍ່ໃຫ້ໝູຢູ່ດ້ວຍ ກັນເພາະລັກສະນະມະນຸດເປັນຢ່າງໜຶ່ງ ແຕ່ລັກສະນະສັດຄືໝູ ເປັນອີກຢ່າງໜຶ່ງ. ເຊັ່ນດຽວກັນ ໃນເມືອງສະຫວັນ ພະເຈົ້າເປັນອົງຊອບທຳ ແຕ່ຖ້າວ່າຄົນບໍ່ຊອບທຳຈະຂຶ້ນຢູ່ໃນສະຫວັນ ເປັນໄປບໍ່ໄດ້. ສະນັ້ນຄັນມະນຸດເຮົາຈະຂຶ້ນຢູ່ສະຫວັນກັບພະເຈົ້າເຮົາຕ້ອງຊອບທຳເສຍກ່ອນ. ມີແຕ່ທາງເສັ້ນດຽວທີ່ຈະເປັນໄປໄດ້ຄື: ໃຫ້ຜູ້ຊອບທຳມາຈາກສະຫວັນມາຮັບໂທດບາບຂອງເຮົາ ຈຶ່ງຈະເຮັດໃຫ້ເຮົາໄດ້ຮັບຄວາມຊອບທຳນັ້ນໄດ້. ຜູ້ທີ່ມາຕາຍແທນ

ໂທດບາບເຮົານັ້ນແມ່ນໃຜ? ____________________________________________

**41** ພະເຢຊູ ຮັບໂທດບາບແທນເຮົາໄດ້ຢ່າງໃດ? (ເລືອກ)

ກ. ມີແຕ່ ພະເຢຊູ ຜູ້ດຽວບໍ່ໄດ້ເຮັດບາບຈັກເທື່ອຈຶ່ງເປັນຜູ້ຊອບທຳ.

ຂ. ມີແຕ່ ພະເຢຊູ ຜູ້ດຽວເປັນທັງ ພະເຈົ້າ ເປັນທັງມະນຸດຈຶ່ງເປັນຜູ້ກາງໄດ້.

ຄ. ພະເຢຊູ ຊ່ວຍເຮົາໄດ້ເພາະບໍ່ໄດ້ຂ້າສັດຕັດຊີວິດຈັກເທື່ອ.

**42** ໃຫ້ທ່ານເອົາຂໍ້ພະຄຳພີຈາກຂ້າງຊ້າຍໃຫ້ເລືອກມາຂຽນໃສ່ວ່າງໃຫ້ຖືກກັບຄວາມໝາຍໃນແຕ່ລະຂໍ້ທີ່ຢູ່ຂ້າງຂວານີ້.

ຢຮ 3:16 ໂລມ 3:23 1 ປຕ 3:18 2 ກລທ 5:19 ໂລມ 3:26

ກ. _____________ ມະນຸດທຸກຄົນເປັນຄົນບາບ.

ຂ. _____________ ພະເຢຊູ ຖືກໂທດແທນຄົນບາບ.

ຄ. _____________ ພະເຈົ້າ ເຮັດໃຫ້ມະນຸດຄືນດີກັນກັບພະອົງດ້ວຍ ພະເຢຊູຄຣິດ

ງ. _____________ ພະອົງຊົງຍຸດຕິທຳແລະເຮັດໃຫ້ຜູ້ທີ່ເຊື່ອວາງໃຈໃນພະອົງມີຄວາມຊອບທຳດ້ວຍ.

**43** ມາເຖິງນີ້ເຮົາຮຽນແຕ່ເລື່ອງ 3 ປະການແລກໃນການສະເໜີຂ່າວປະເສີດຄືຫຍັງແດ່? ຈົ່ງຕື່ມຄວາມທີ່ຂາດຕໍ່ໄປນີ້

ກ. ______________________ ເປັນຄົນບາບທີ່ຈະຖືກ ______________________

ຂ. _____________ ຊົງ _______________ ທັງຊົງ _______________ ເຮົາດ້ວຍ.

ຄ. _____________ ຖືກ _______________ ແທນ _____________________ .

**44** ໃຫ້ອ່ານ ໂຢຮັນ 10:10

ກ. ພະເຢຊູ ມາເພື່ອເຂົາຈະໄດ້ຊີວິດຢ່າງໃດ? ________________________________

ຂ. ບາດກ້າວທີ 4 ໃນການສະເໜີຂ່າວປະເສີດແມ່ນຫຍັງ? (ຕື່ມຄວາມທີ່ຂາດ)

ເພື່ອເຮົາຈະໄດ້ __________________________ ດ້ວຍ __________ ພະເຢຊູຄຣິດ.

**45** ຕໍ່ໄປໃຫ້ອ່ານ ໂຢຮັນ 3:14-16 ເຮົາຕ້ອງເຮັດຫຍັງເພື່ອຈະໄດ້ຊີວິດອັນຕະຫຼອດໄປເປັນນິດ? ຕ້ອງ____________________________________ ພະເຢຊູຄຣິດ. (ຈົ່ງຕື່ມຄວາມ)

**46** ພະເຈົ້າ ປະທານຫຍັງໃຫ້ຄົນທີ່ເຊື່ອວາງໃຈໃນ ພະເຢຊູ? _________________________

**47** ເພື່ອຈະໃຫ້ ພະເຈົ້າ ຍົກໂທດບາບຂອງເຮົາໃຫ້ຫາຍໄປ ເຮົາ ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະເຊື່ອວາງໃຈ ໃນພະ ເຢຊູ. ໃນສອງຄວາມນັ້ນ

ກ. ອັນໃດສະແດງເຖິງການຫັນໜ້າຈາກຄວາມບາບໄປສູ່ ພະເຢຊູ? ________________

ຂ. ອັນໃດສະແດງເຖິງເຮົາໄວ້ໃຈວ່າບາບເຮົາຫາຍໄປແລ້ວເພາະ ພະເຢຊູ ໄຖ່ໂທດບາບແທນເຮົາແລ້ວ? ______________________________________________________

**48** ບາງຄົນອາດຈະເຊື່ອເຫດການໜຶ່ງ ເຫດການໃດເປັນຄວາມຈິງແຕ່ຍັງບໍ່ຍອມປ່ຽນແປງທ່າທີ ເຂົາເຊື່ອຢູ່ ແຕ່ບໍ່ ວາງໃຈ. ຄຳໃດຕໍ່ໄປນີ້ສະແດງເຖິງຄົນທີ່ເຊື່ອແລະວາງໃຈດ້ວຍ? (ເລືອກ)

ກ. "ຂ້ອຍກໍ່ເຊື່ອຢູ່ວ່າມີຄົນຊື່ວ່າເຢຊູຄຣິດທີ່ປະຊາຊົນແລະທະຫານໂລມຂ້າຕາຍຕັ້ງແຕ່ສອງພັນປີ ມາແລ້ວ"

ຂ. "ເຊື່ອວ່າ ພະເຢຊູ ຕາຍແທນບາບຂອງຂ້ອຍແລ້ວ ເພາະເຫດນັ້ນຂ້ອຍຄືນດີກັບ ພະເຈົ້າ ໄດ້ແລ້ວ"

ຄ. "ເອົາລະ! ພະເຢຊູ ຕາຍເພື່ອບາບຂອງໂລກແລ້ວ ຂ້ອຍກໍ່ຮັບຮູ້ຢູ່ແລ້ວ ແຕ່ບໍ່ຢາກປ່ຽນຊີວິດເທື່ອ"

**49** ການນຳຄົນມາເປັນຄຣິດສະຕຽນປະກອບດ້ວຍບາດກ້າວ 3 ປະການທີ່ໄດ້ຮຽນມາແລ້ວ. (ຈົ່ງຕື່ມຄວາມທີ່ຂາດຕໍ່ໄປ ນີ້).

ກ. ບາດກ້າວແລກຄື: ການ ________________________________ (ຄຳພິຍານ)

ຂ. ບາດກ້າວທີສອງຄື: ການຍົກສະເໜີ ____________________________________

ຄ. ບາດກ້າວທີສາມຄື: ___________ ຂໍໃຫ້ເຂົາ _________________ ໄວ້ກັບພະອົງ.

**50** ບາດນີ້ທ່ານໄດ້ຮຽນຮູ້ເລື້ອງການກ່າວຄຳພິຍານໃຫ້ຈັບໃຈຜູ້ຟັງແລ້ວ ທ່ານຮູ້ເລື້ອງແຜນການຂອງ ພະເຈົ້າໃນ ຂ່າວປະເສີດທີ່ຈະສະເໜີເລື້ອງໃຫ້ເຂົາຮູ້ແລ້ວແຕ່ຍັງມີບາດກ້າວສຸດທ້າຍອີກດ້ວຍຄື: ຮ້ອງຂໍໃຫ້ເຂົາມອບຕົວໄວ້ກັບພະເຢຊູ. ໃຫ້ທ່ານເປີດອ່ານ 3 ຂໍ້ຈາກພະຄຳພີຕໍ່ໄປນີ້ ແລ້ວໃຫ້ໝາຍ √ ໄວ້ຂໍ້ໃດທີ່ເໝາະສົມເພື່ອຮ້ອງຂໍໃຫ້ເຂົາມອບຕົວ.

______ ໂລມ 10:10 ______ ໂລມ 3:23 ______ ພະນິມິດ 3:20

**51** ໃຫ້ອ່ານ ພນມ 3:20 ໃນບ່ອນໃດທີ່ອາກາດໜາວຫຼາຍ ເຮືອນທີ່ປ້ອງກັນອາກາດໜາວນັ້ນເຂົາເຮັດແຈບດີມີປະ ຕູທີ່ປິດຕາຍຕົວຈົນວ່າ ສຽງຄົນຮ້ອງຢູ່ຂ້າງນອກຈະບໍ່ໄດ້ຍິນເຂົາໄປຮອດໃນເຮືອນຖ້າວ່າມີແຂກມາຢ້ຽມເຂົາບໍ່ໄດ້ຮ້ອງຖາມເຈົ້າຂອງເຮືອນເຂົາມີແຕ່ເຄາະປະຕູຈົນກວ່າເຈົ້າພາບມາເປີດໃຫ້ເຂົາ ດັ່ງນັ້ນແມ່ນຜູ້ໃດເປີດປະຕູ?

______ ເຈົ້າຂອງເປີດ. ______ ແຂກເປີດ.

**52** ຖ້າວ່າ ພະເຢຊູ ເຄາະໃສ່ປະຕູຈາກຂ້າງນອກໝາຍຄວາມວ່າພະອົງບໍ່ບັງຄັບເຂົາຈັກເທື່ອ ມີແຕ່ເຈົ້າຂອງເທົ່ານັ້ນ ທີ່ມີ ສິດເປີດ. ຖ້າວ່າເຈົ້າຂອງເອງບໍ່ເປີດໃຫ້ ພະເຢຊູບໍ່ເຂົ້າໄປເຮົາຈະຍົກຂໍ້ພະຄຳພີໃດສະແດງໃຫ້ຜູ້ຟັງວ່າຕົວເຈົ້າຂອງເອງຕ້ອງເປີດໂອກາດໃຫ້ ພະເຢຊູເຂົ້າ? (ຕື່ມ ບົດແລະຂໍ້) ພນມ _____ : _____



**53** ຖ້າວ່າຜູ້ຟັງຮັບຮູ້ວ່າຕົວເອງເປັນຄົນບາບແລ້ວ ແລະເຂົາເຂົ້າໃຈວ່າ ພະເຈົ້າ ສາມາດຍົກຜິດບາບໄດ້ດ້ວຍທາງ ຄວາມຕາຍຂອງ ພະເຢຊູ ຍັງເຫຼືອແຕ່ຈະເປີດຈິດໃຈໃຫ້ ພະເຢຊູ ເຂົ້າມາປົກຄອງ. "ເປີດຈິດໃຈໃຫ້ ພະເຢຊູ ເຂົ້າ" ໝາຍຄວາມວ່າຢ່າງໃດ? (ເລືອກ)

ກ. ເປີດປະຕູໃນທີ່ປະຊຸມໃຫ້ທຸກຄົນເຂົ້າໄດ້.

ຂ. ຮັບສິນບັບຕິສະມາ.

ຄ. ຖິ້ມໃຈເກົ່າເອົາໃຈໃໝ່ ວາງໃຈເຊື່ອໃນ ພະເຢຊູ ແລ້ວມອບຕົວໄວ້ໃຫ້ ພະເຢຊູ ເປັນເຈົ້າ.

ງ. ຈົດຊື່ລົງທະບຽນມາເປັນສະມາຊິກໃນຄຣິດສະຕະຈັກ.

**54** ຖ້າວ່າທ່ານໄດ້ກ່າວຄຳພິຍານແລ້ວໄດ້ອະທິບາຍໃຫ້ຜູ້ຟັງເຂົ້າໃຈເລື່ອງຂ່າວປະເສີດຈົນກວ່າເພິ່ນເຂົ້າໃຈແລ້ວ ທ່ານອາດຈະຖາມເພິ່ນຢ່າງໃດຕໍ່ໄປ? (ເລືອກ)

ກ. "ທ່ານຢາກຈະຮັບສິນບັບຕິສະມາບໍ່?"

ຂ. "ທ່ານຈະອ້ອນວອນເຊີນ ພະເຢຊູ ເຂົ້າໃນຈິດໃຈຍົກຜິດບາບບໍ່?"

ຄ. "ທ່ານຢາກລົງທະບຽນເປັນສະມາຊິກບໍ່?"

*ຫຼືທ່ານອາດຈະຖາມເພິ່ນຢ່າງນີ້ກໍ່ໄດ້ "ຊີວິດເຮົາຄ້າຍຄືກັນກັບເຮືອນ ພະເຢຊູ ຢືນຢູ່ຂ້າງນອກລໍຖ້າໃຫ້ເຈົ້າ ຂອງເປີດປະຕູໃຫ້ ແຕ່ພະອົງບໍ່ບັງຄັບເຂົາຈັກເທື່ອ ແລ້ວແຕ່ເຈົ້າຂອງຈະເປີດໂອກາດໃຫ້ເຂົ້າມາທ່ານຈະເຊີນໃຫ້ເຂົ້າມາບໍ່?"*

*ຫຼືວ່າ*

*"ເຮົາສອງຄົນອ້ອນວອນຮ່ວມກັນກໍ່ໄດ້ ຫຼື ຖ້າວ່າເຈົ້າຢາກອ້ອນວອນຜູ້ດຽວກໍ່ໄດ້ ພະເຈົ້າ ຟັງເຂົ້າໃຈພາສາໃດກໍ່ໄດ້ ມີແຕ່ໃຫ້ບອກພະເຈົ້າວ່າຢາກໃຫ້ພະອົງຍົກຜິດບາບໃຫ້ຫາຍໄປແລະເຊີນໃຫ້ພະອົງມາເປັນເຈົ້າໃນຊີວິດຂອງທ່ານ" ເຮົາຈະປຶກສາຫາລືກັນໃນປະຊຸມກ່ຽວເລື່ອງນີ້ອີກ.*

**55** ຄວາມຈິງມີຫຼາຍວິທີທາງທີ່ຈະນຳຄົນມາເຊື່ອວາງໃຈໃນພະເຢຊູບາງເທື່ອຜູ້ທີ່ບໍ່ໄດ້ສຶກສາຈັກດີ້ອາດຈະນຳຄົນມາ ເພິ່ງພະເຢຊູ ຫຼາຍກວ່າຄົນທີ່ຮຽນຮູ້ຫຼາຍແຕ່ບົດຮຽນນີ້ສອນວິທີທາງເສັ້ນໜຶ່ງທີ່ທ່ານໃຊ້ກັບຫຼາຍຄົນໄດ້ ເປັນຕົ້ນໃຫ້ ພະວິນຍານຂອງ ພະເຈົ້າເປັນຜູ້ຊີ້ງນຳທ່ານໃນການປ່າວປະກາດ. ຕໍ່ໄປໃຫ້ທ່ານຈົດຈຸດສຳຄັນໃນການສະເໜີຂ່າວປະເສີດສີ່ ປະການ:

1. ____________________________________________

2. ____________________________________________

3. ____________________________________________

4. ____________________________________________

ໝາຍເຫດ: ຖ້າວ່າ ພະເຢຊູ ມາເປັນເຈົ້າຊີວິດຂອງເຮົາແລ້ວເຮົາຈຳເປັນຕ້ອງສະລະເຈົ້າ ອື່ນ ໆຜູ້ໃດມີຂອງຮັກສາ ເວດມົນ ຫຼື ສະຖານທີ່ຂອງຮັກສານັ້ນຕ້ອງຖິ້ມ. ຖ້າເພິ່ງເລືອດຂອງ ພະເຢຊູ ແລ້ວຈິ່ງເລີກຈາກຂອງຮັກສາທຸກຢ່າງ. ພະເຈົ້າ ຊົງສ້າງທຸກສິ່ງທຸກຢ່າງ ຄົນເຮົາເຄົາລົບສິ່ງໃດກໍ່ຕາມ ເປັນວັດຖຸກໍ່ດີ ຫຼື ວິນຍານກໍ່ດີເປັນທີ່ເຮົາດູຖູກ ພະເຈົ້າ.

## ຕາຕະລາງການນຳຄົນມາເປັນຄຼິດສະຕຽນ (ຈົ່ງຕື່ມຄວາມທີ່ຂາດໃນນັ້ນ)

ບາດກ້າວທີ 1

| | |
|---|---|
| ແນະນຳ: | ດ້ວຍການເລົ່າຄຳ ___________ |
| | 1. ___________ ທີ່ບໍ່ໄດ້ເປັນຄຼິດສະຕຽນຊີວິດເປັນຢ່າງໃດ |
| | 2. ___________ ວັນເວລາຮັບເຊື່ອເປັນຢ່າງໃດ? |
| | 3. ___________ ຈາກເຊື່ອແລ້ວ ພະເຢຊູ ປ່ຽນຊີວິດໄປຢ່າງໃດ? |

ບາດກ້າວທີ 2

| ການຍົກສະເໜີຂ່າວປະເສີດ | ຂໍ້ພະຄຳພີ |
|---|---|
| 1. ___________ເປັນຄົນບາບທີ່ຈະຖືກຕັດສິນ. | ໂລມ ___ :___ |
| | ໂຢຮັນ___ : ___ |
| 2. ພະເຈົ້າ ຊັງ ___________ ທັງຊັງ ___________ ເຮົາດ້ວຍ. | ໂລມ ___ : ___ |
| | 1 ເປໂຕ 3: ___ |
| 3. ___________ ຖືກຕັດສິນແທນເຮົາ ___________ | 2 ກລທ 5: ___ |
| | ໂລມ 3: ___ |
| 4. ເຮົາຈະໄດ້ ____________ ດ້ວຍ _________ ພະເຢຊູ. | ໂຢຮັນ 10: ___ |
| | ໂຢຮັນ 3: ___-___ |

ບາດກ້າວທີ 3

| | |
|---|---|
| ຮ້ອງຂໍໃຫ້ເຂົາມອບຕົວໄວ້ກັບ ພະເຈົ້າ | |
| | ເທື່ອໃດທີ່ເຮົາມີໂອກາດເລົ່າເລື່ອງຂ່າວປະເສີດເຮົາສົມຄວນຈະ |
| | ຮ້ອງຂໍໃຫ້ຜູ້ຟັງ _______ ຈິດໃຈຂອງເຂົາໃຫ້ ______________ ເຂົ້າມາ. |
| | ພະນິມິດ ___ : ___ |

*ຢ່າລືມຕອບບົດເສັງເລີຍເດີ!*

**ຄຳຕອບ:**

**1** *1. ກ່າວເລື່ອງກ່ອນບໍ່ໄດ້ມາເຊື່ອເທື່ອ ຊີວິດເປັນຢ່າງໃດ. 2. ເມື່ອເວລາມາເຊື່ອເປັນຢ່າງໃດ. 3. ຫຼັງຈາກເຊື່ອມາແລ້ວ ພະເຢຊູ ປ່ຽນຊີວິດຫຼາຍປານໃດ.*

**2** *ງ. ຖືກ*

**3** *ຄ. ຖືກ*

**4** *ກ. ຖືກ*

**5** *ຄຳພິຍານ (ເປັນການແນະນຳ)*

**ຄຳຕອບ (ຕໍ່):**

**6** *1. ການແນະນຳ (ຄຳພິຍານ) 2. ການຍົກສະເໜີເລື່ອງຂ່າວປະເສີດ.*
*3. ຮ້ອງຂໍໃຫ້ເຂົາມອບຕົວໄວ້ໃຫ້ພະອົງ.*

**7** *ກ. ບໍ່. ຂ. ຂໍ້ 1 ຖືກ*

**8** *ນົກມາກິນເສຍ.*

**9** *ຄ. ຖືກ*

**10** *ກ. ຖືກ*

**11** *ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດກັນ*

**12** *ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດກັນ*

**13** *ສະເໜີ...ຂ່າວປະເສີດ.*

**14** *ກ. ສຸດທ້າຍ. ຂ. ທຸກ ໆ ຄົນ. ຄ. ພະເຈົ້າ. ງ. ສຸດທ້າຍ. ຈ. ພະເຢຊູ.*

**15** *1. ຖືກກັບຂໍ້ ຂ. 2. ຖືກກັບຂໍ້ ງ 3. ຖືກກັບຂໍ້ ກ 4. ຖືກກັບຂໍ້ ຄ.*

**16** *ກ. ທຸກຄົນ. ຄ. ພະເຢຊູ. ຂ. ພະເຈົ້າ. ງ. ຊີວິດອັນຄະຫຼອດໄປ*

**17** *ຖ້າວ່າເຮົາໄວ້ເນື້ອເຊື່ອໃຈໃນ ພະເຢຊູ ພະອົງຈະໃຫ້ ມີຊີວິດອັນຕະຫຼອດໄປເປັນນິດ.*
*(ຄຳຄ້າຍຄືກັນກໍ່ໄດ້)*

**18** *3. ພະເຢຊູ ຕາຍທີ່ໄມ້ກາງແຂນເພື່ອແທນຄົນບາບຄືພວກເຮົາ.*
*4. ຄັນເຮົາຮັບ ພະເຢຊູ ເປັນພະຜູ້ຊ່ອຍເຮົາຈິ່ງ ຈະມີສິດຂຶ້ນໄປສະຫວັນໄດ້.*
*(ຄຳຄ້າຍກັນກໍ່ໄດ້)*

**19** *2. ພະເຈົ້າ ເປັນຜູ້ມີຄວາມຍຸດຕິທຳຈຶ່ງຮັບຄົນບາບຂຶ້ນສະ ຫວັນບໍ່ໄດ້ ແຕ່ພະອົງຍັງຮັກເຮົາ ຈຶ່ງບໍ່ຢາກປະເຮົາໄປ.*
*3. ພະເຢຊູ ຕາຍແທນໂທດບາບເຮົາ ແລະ ຍັງຊະນະ ຄວາມຕາຍໂດຍຟື້ນຄືນຂຶ້ນມາອີກ.*
*4. ຍັງເຫຼືອແຕ່ເຮົາທີ່ຈະເຊື່ອວາງໃຈໃນ ພະເຢຊູ ຈຶ່ງ ຈະມີຊີວິດຢູ່ກັບພະອົງຕໍ່ໄປໃນສະ ຫວັນ. (ຄຳຄ້າຍຄືກັນກໍ່ໄດ້)*

**20** *ຄ. ຖືກ*

**21** *1. ທຸກຄົນເປັນຄົນບາບທີ່ຈະ ຕ້ອງຖືກຕັດສິນ.*
*2. ພະເຈົ້າຊົງຍຸດຕິທຳທັງຊົງຮັກ ເຮົາດ້ວຍ.*
*3. ພະເຢຊູຖືກຕັດສິນໂທດແທນເຮົາ*
*4. ເຮົາຈະໄດ້ຊີວິດອັນຕະຫຼອດໄປ ເປັນນິດດ້ວຍເພິ່ງ ພະເຢຊູ.*

**22** *ກ. ຖືກ*

**23** *ງ. ຖືກ*

**24** *ຕາຍ.*

**25** *ຕາຍ.*

**26** *ບາບ*

**ຄໍາຕອບ (ຕໍ່):**

**27** *ກ. ບາບ. ຄ. ຄວາມຜິດບາບ. ຈ.ບາບ. ຂ. ບາບ. ງ. ບາບ. ສ. ບາບ.*

**28** *ໂລມ 3:23 ແລະ ໂລມ 3:10-11*

**29** *ຄວາມຜິດບາບຄື: ທ່າທີຂອງຄົນທີ່ບໍ່ຍອມຢູ່ຕາມນໍ້າພະໄທຂອງ ພະເຈົາ*
*ບາບ ຄື: ຜົນມາຈາກທ່າທີນັ້ນທີ່ປາກົດມາ ໃນການໄດ້ລົງມືກະທໍາແຕ່ລະ ປະການ*

**30** *ລັກສະນະ ພະເຈົາ. 1. ກ. ຖືກ 2. ຂ. ຖືກ*

**31** *ຮັກ...ຍຸຕິດທໍາ*

**32** *ຂ. ຖືກ*

**33** *ກ. ພະເຈົາ ຂ. ມະນຸດເຮົາ*

**34** *ໂລມ 3:26*

**35** *ກ. ມະນຸດ. ຄ.ຄວາມຕາຍ. ຂ. ຄວາມບາບ.*

**36** *ກ. ພະເຈົາ ຂ. ຮັກ...ຊອບທໍາ ຄ. ຊອບທໍາ.*

**37** *ກ. ພະຄຼິດ ຂ. ພະເຈົາ*

**38** *ແທນເຮົາ.*

**39** *ຕາຍ*

**40** *ພະເຢຊູ*

**41** *ກ. ແລະ ຂ. ຖືກ*

**42** *ກ. ໂລມ 3:23 ຂ. 1 ເປໂຕ 3:18 ຄ. 2 ກລທ 5:19 ງ. ໂລມ 3:26*

**43** *ກ. ທຸກຄົນ...ຕັດສິນ ຂ. ພະເຈົາ...ຍຸດຕິທໍາ...ຮັກ ຄ. ພະເຢຊູ...ຕັດສິນ...ເຮົາ*

**44** *ກ. ອັນຕະຫຼອດໄປເປັນນິດ. ຂ. ຊີວິດອັນຕະຫຼອດໄປເປັນນິດ...ເພິ່ງ (ເຊື່ອກໍ່ໄດ້)*

**45** *ວາງໃຈເຊື່ອ.*

**46** *ຊີວິດອັນຕະຫຼອດໄປເປັນນິດ.*

**47** *ກ. ຖິ້ມໃຈເກົ່າເອົາໃຈໃໝ່ ຂ. ວາງໃຈເຊື່ອ.*

**48** *ຂ. ຖືກ*

**49** *ກ. ແນະນໍາ ຂ. ຂ່າວປະເສີດ ຄ. ຮ້ອງ...ມອບຕົວ*

**50** *ພະນິມິດ 3:20 ຖືກ*

**51** *ເຈົາຂອງເປີດ.*

**52** *ພນມ 3:20*

**53** *ຄ. ຖືກ*

**54** *ຂ. ຖືກ*

**55** *1. ທຸກຄົນເປັນຄົນບາບທີ່ ພະເຈົາ ຈະຕັດສິນ. 2. ພະເຈົາ ຊົງຍຸດຕິທໍາ ທັງຊົງຮັກເຮົາ ດ້ວຍ. 3. ພະເຢຊູ ຖືກຕັດສິນແທນເຮົາ. 4. ເຮົາຈະໄດ້ຊີວິດອັນຕະຫຼອດໄປ ດ້ວຍເພິ່ງພະເຢຊູ.*